# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ພຶສພາ 2007 (5-20-2007)

## <u>ປະເຊີນກັນຊື່ງໜ້າໃນຄວາມຮັກ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ມັດທາຍ 18:15-17; ຄາລາເຕັຽ 5:13-15;6:1-5

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ເມື່ອມີການປະເຊີນກັນຊື່ງໜ້າມັນຈຳເປັນທີ່ຈະຕ້ອງແກ້ໄຂບັນຫາຂໍ້ຂັດແຍ້ງໃຫ້ລຸລ່ວງ, ຄຣິສຕຽນຕ້ອງປະເຊີນກັນຊື່ງໜ້າໃນຄວາມຮັກເພື່ອຮັກສາສາຍສຳພັນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂື້ນເພື່ອຊ່ວຍທ່ານໃຫ້ເປັນຜູ້ສ້າງຄວາມສງົບສຸກທີ່ແທ້ຈິງແລະແກ້ໄຂບັນຫາຂໍ້ຂັດແຍ່ງສ່ວນຕົວຂອງແຕ່ລະຄົນໂດຍ:

- ການຮຽນວິທີທີ່ຈະໃຫ້ໄດ້ຜົນດີຕໍ່ເຫດການຂັດແຍ້ງກັນເມື່ອທ່ານຫາກປະເຊີນຊື່ງໜ້າກັບຄົນອື່ນໆ; ແລະ
- ການປັບປຸງທາງທີ່ທ່ານສາມາດປະເຊີນຊື່ງໜ້າກັບຄົນອື່ນໆເພື່ອຈະບໍ່ໃຫ້ເສັຍສາຍສຳພັນກັນ.

## <u>ຂ້າພະເຈົ້າຈະປະເຊີນຊື່ງໜ້າກັບຜູ້ໃດຜູ້ນຶ່ງໃນທາງແຫ່ງຄວາມຮັກເພື່ອຈະຊ່ວຍແກ້ໄຂບັນຫາຂໍ້ຂັດແຍ້ງໄດ້ຢ່າງໃດ?</u>

ເຈົ້າເຄີຍໄດ້ບອກລາວບໍ່ວ່າສິ່ງທີ່ລາວເຮັດໃຫ້ເຈົ້າເຈັບປວດນັ້ນ ແລະການທີ່ເຈົ້າຢາກໃຫ້ສາຍສຳພັນນັ້ນດີຂື້ນ? ນີ້ຄືຄຳຖາມທີ່ຂ້າພະເຈົ້າມັກໃຊ້ກັບພວກຄົນທີ່ບໍ່ສາມາດລົງເອີຍກັນ. ເປັນຫຍັງຂ້າພະເຈົ້າຈຶ່ງຖາມເຊັ່ນນີ້? ເພາະວ່າມີຫລາຍໆຄົນ, ຮວມທັງພວກຄຣິສຕຽນດ້ວຍ, ໂດຍຄິດວ່າປະເຊີນຊື່ງໜ້າກັນແມ່ນການເຮັດສິ່ງທີ່ບໍ່ດີ. ພວກເຂົາຄິດວ່າມັນແມ່ນການເປີດເຜີຍໃຫ້ເຫັນຄວາມຜິດທີ່ຜູ້ອື່ນໄດ້ເຮັດນັ້ນແລະຄວາມເຈັບປວດທີ່ເຂົາກໍ່ຂື້ນນັ້ນມັນແຫ່ງຈະເຮັດໃຫ້ບັນຫານັ້ນໃຫຍ່ຂື້ນກວ່າເກົ່າອີກ. ຄົນທີ່ມີການຂັດແຍ້ງກັນຕ້ອງໄດ້ຮຽນເຖິງການປະເຊີນຊື່ງໜ້າກັນໃນຄວາມຮັກ ເພາະມັນເປັນທາງສຳຄັນຕາມຫລັກພຣະຄັມພີທີ່ເປັນຂັ້ນຕອນຂອງການສ້າງຄວາມສງົບອັນແທ້ຈິງ.

ຂໍ້ພຣະທັມທັງຫລາຍທີ່ພວກເຮົາສຶກສາໃນບົດຮຽນນີ້ ຈະສອນພວກເຮົາສະເພາະເຈາະຈົງທີ່ຄຣິສຕຽນຕ້ອງເຮັດຕາມຂັ້ນຕອນໃນການປະເຊີນຊື່ງໜ້າກັບຄົນອື່ນໆ ແລະຕາມວິນຍານຊຶ່ງຈະນຳພາໃຫ້ເຖິງການປົວແປງສາຍສຳພັນທີ່ຫັກພັງແລະຈະນຳພຣະກຣຸນາສູ່ພຣະເຈົ້າ.

## <u>ສຶກສາພຣະຄັມພີ</u>

### 1. <u>ຂັ້ນຕອນ</u> (ມັດທາຍ 18:15-17)

ຂັ້ນຕອນຂອງການປະເຊີນຊື່ງໜ້າຕໍ່ເຫດການມັນບໍ່ແມ່ນຂອງທີ່ມ່ວນຊື່ນຫລືງ່າຍດາຍ, ແຕ່ວ່າມັນກໍສຳຄັນທີ່ຄຣິສຕຽນຕ້ອງຮູ້ຂັ້ນຕອນແລະຕຽມຕົວໃຊ້ມັນ ເພື່ອຮັກສາສາຍສຳພັນທີ່ກຳລັງຈະພິນາດລົງນັ້ນ.

ເມື່ອທ່ານຫາກປະເຊີນຊື່ງໜ້າຕໍ່ກັນ, ພະຍາຍາມບໍ່ໃຫ້ມີຫລາຍຄົນມາຫຍຸ້ງກ່ຽວນຳ. ເລີ້ມຕົ້ນແບບສ່ວນຕົວກ່ອນ, ນຶ່ງຕໍ່ນຶ່ງ. ໃຫ້ເຮື່ອງທີ່ເຄືອງໃຈກັນນັ້ນຖືກແກ້ໄຂທຳຄວາມເຂົ້າໃຈໂດຍບໍ່ໃຫ້ຍືດຍາວ ແລະພິສູດໃຫ້ຜູ້ນັ້ນເຫັນເຖິງເປົ້າໝາຍຂອງທ່ານທີ່ຈິງໃຈ**ຢາກໄດ້ຜູ້ນັ້ນຄືນມາອີກ**, ບໍ່ແມ່ນຢາກໄດ້ຊະນະເພື່ອໃຫ້ໄດ້ຄວາມສນັບສນູນເພີ້ມ.

ຕອນຍັງນ້ອຍມີເກມນຶ່ງທີ່ມັກຫລິ້ນຄື " ກົ້ງເບິ່ງໜ້າກັນ " ຖ້າຜູ້ໃດຫາກກົ້ງເບິ່ງໜ້າຜູ້ອື່ນໂດຍບໍ່ພິບຕາຜູ້ນັ້ນກໍເປັນຜູ້ຊະນະ. ໜ້າເສັຍໃຈ, ພວກເຮົາກໍຫລິ້ນເກມອັນນີ້ເມື່ອມີການຂັດແຍ້ງກັນ. ມີຫລາຍຄົນຍັງຖືວ່າຜູ້ທີ່ເລີ້ມຕົ້ນກ່ອນເປັນຜູ້ທີ່ຜິດ. ພຣະເຢຊູບອກພວກເຮົາໃຫ້ເຮັດໃນທາງດີກວ່ານັ້ນອີກ. ເປັນຜູ້ຕົ້ນ. **ໄປແມ້ກະທັ້ງຄວາມຜິດບາບຂອງຜູ້ອື່ນອາດຈະຕໍ່ຕ້ານກັບທ່ານ**. ເປັນຫຍັງຈຶ່ງບໍ່ລໍຖ້າໃຫ້ຜູ້ທີ່ເຮັດໃຫ້ທ່ານເຈັບປວດນັ້ນມາຫາທ່ານ? ລາວອາດຈະບໍ່ຄຳນຶງວ່າລາວເປັນຜູ້ເຮັດໃຫ້ທ່ານເຈັບ. ຂນະທີ່ທ່ານຍັງລໍຄອຍນັ້ນ, ບັນຫານັ້ນແຫ່ງເພີ້ມໄວຂຶ້ນແລະຄວາມເຈັບປວດໃນຂນະນັ້ນກໍກ້ຽວພັນເປັນປຸ້ມເຮັດໃຫ້ເຈັບໄປຕລອດຊີວິດ. ຕິດຕາມຕົວຢ່າງຜູ້ທີ່ໄດ້ມາຫາພວກເຮົາຂນະທີ່ຄວາມຜິດບາບຂອງພວກເຮົາໄດ້ທຳລາຍສາຍສຳພັນລະຫວ່າງພວກເຮົາກັບພຣະເຈົ້າ. ການທີ່ເປັນຜູ້ເລີ້ມຕົ້ນກ່ອນບໍ່ແມ່ນເປັນຜູ້ທີ່ຜິດ, ແຕ່ວ່າເປັນການສະແດງຄວາມຮັກຕໍ່ຄົນອື່ນໆ, ຫວັງຢາກປົວແປງສາຍສຳພັນທີ່ຫັກພັງ, ແລະມີຄວາມເຊື່ອໃນພຣະເຈົ້າ.

ຖ້າຫາກວ່າບັນຫາບໍ່ໄດ້ຖືກແກ້ໄຂຣະຫວ່າງພວກທ່ານທັງສອງ, **ຖ້າຫາກລາວບໍ່ຟັງ**, ໃຫ້ຫາຄົນກາງ, ຜູ້ທີ່ສາມາດຟັງທັງສອງຝ່າຍກ່ຽວກັບເຣື່ອງນັ້ນແລະຊ່ວຍພວກທ່ານທັງສອງໃຫ້ມີທາງທີ່ຈະຄືນດີກັນໄດ້. ຄົນກາງນັ້ນຕ້ອງເປັນຄົນທີ່ຮູ້ຈັກຟັງ, ຜູ້ຮູ້ສັງເກດ, ແລະສັດຊື່ຕໍ່ການຊີ້ງນຳພາເທິງເສັ້ນທາງຂອງພຣະຄຣິດສູ່ຄວາມສງົບສຸກ. ການຊອກຫາໃຫ້ມີຄົນກາງສະແດງໃຫ້ຜູ້ທີ່ເຮັດໃຫ້ທ່ານເຈັບປວດນັ້ນໄດ້ຮູ້ວ່າ ທ່ານຢາກໃຫ້ສາຍສຳພັນຄືນດີກັນອີກຫລາຍສ່ຳໃດ.

ຖ້າຄົນຜູ້ນັ້ນບໍ່ຕອບສນອງຕໍ່ທ່ານຫລືຄົນກາງແລ້ວ, ພຣະເຢຊູໄດ້ບອກໃຫ້ເຮັດບາດກ້າວທີສາມ: **ແຈ້ງຕໍ່ຄຣິສຕະຈັກ**. ອີກເທື່ອນຶ່ງ, ພະຍາຍາມບໍ່ໃຫ້ມີຫລາຍຄົນເຂົ້າມາຫຍຸ້ງກ່ຽວນຳ. ພວກຜູ້ນຳຂອງຄຣິສຕະຈັກສາມາດເປັນຕົວແທນໃຫ້ສະມາຊິກຂອງໂບດໃນການຈັດການກັບບັນຫາຂໍ້ຂັດແຍ້ງນັ້ນ. ໂດຍຜ່ານການຈັດຕັ້ງນັ້ນ, ຄຣິສຕະຈັກຈຶ່ງສາມາດບອກພວກທີ່ບໍ່ຖືກຕ້ອງກັນນັ້ນໃຫ້ລະນຶກເຖິງການຕັດສິນໃຈຂອງພວກເຂົາຕໍ່ພຣະຄຣິດ ແລະຊ່ວຍຊີ້ໃຫ້ພວກເຂົາເຫັນຄວາມຍາກລຳບາກໃນການປະຕິບັດງານ ແລະການເປັນພະຍານຂອງພວກຄົນຂອງພຣະເຈົ້າເນື່ອງມາຈາກການປະຕິເສດໃນການຄືນດີກັນ. ສາຍສຳພັນທີ່ຫັກພັງໃນຮ່າງກາຍຂອງພຣະຄຣິດກໍມີຜົນກະທົບຕໍ່ພວກເຮົາທັງໝົດ, ຄຣິສຕະຈັກຕ້ອງທ້າທາຍໃຫ້ພວກຄຣິສຕຽນຖວາຍກຽດຕໍ່ພຣະເຈົ້າໂດຍການຊອກຫາຄວາມສງົບສຸກ.

ເມື່ອຂ້າພະເຈົ້າໃຫ້ຄຳປຶກສາແກ່ຄູ່ຜົວເມັຽທີ່ບໍ່ຖືກຕ້ອງປອງດອງກັນນັ້ນ, ຂ້າພະເຈົ້າມັກຖາມພວກເຂົາເຈົ້າວ່າ: *ພວກທ່ານຢາກປະຮ້າງກັນບໍ່?* ຂ້າພະເຈົ້າຖາມເຊັ່ນນີ້ບໍ່ແມ່ນວ່າຂ້າພະເຈົ້າຍອມຈຳນົນຕໍ່ເຣື່ອງການແຕ່ງງານນັ້ນດອກ. ແຕ່ຫາກວ່າເພື່ອຈະສະດຸ້ງພວກເຂົາໃຫ້ເຫັນເຖິງຜົນຂອງການບໍ່ລົງລອຍກັນ-ຈຸດຈົບຂອງສາຍສຳພັນ. ເມື່ອຜູ້ໃດຜູ້ນຶ່ງປະຕິເສດທີ່ຈະຕອບສນອງຕໍ່ຜູ້ທີ່ເຂົາເຮັດໃຫ້ເຈັບ, ຄົນກາງ, ຫລືຜູ້ນຳຄຣິສຕະຈັກ, ພຣະເຢຊູບອກໃຫ້ພວກເຮົາເຮັດຕໍ່ອີກຂັ້ນນຶ່ງ: **ປ່ອຍໃຫ້ເຂົາເປັນເໝືອນຄົນທີ່ບໍ່ມີຄວາມເຊື່ອໃນພຣະເຈົ້າ, ແລະເປັນເໝືອນຄົນເກັບພາສີ**. ພຣະເຢຊູບອກໃຫ້ພວກເຮົາຍອມຈຳນົນປ່ອຍໃຫ້ຄົນຈົມຢູ່ໃນຄວາມຂັດແຍ້ງກັນຫລື? ບໍ່ດອກ, ແຕ່ວ່າພຣະອົງບອກພວກເຮົາໃຫ້ກະຕຸ້ນພວກເຂົາໃຫ້ເຫັນຜົນສຸດທ້າຍຂອງການບໍ່ລົງລອຍກັນ-ຈຸດຈົບສາຍສຳພັນ ແລະການເປັນເພື່ອນຮ່ວມງານຂອງຜູ້ນັ້ນກັບຄອບຄົວຂອງພຣະເຈົ້າ. ພຣະເຢຊູຢາກໃຫ້ພວກເຮົາໄລ່ພວກຄົນທີ່ບໍ່ຕອບສນອງອອກຈາກໂບດຫລື? ບໍ່ເປັນດັ່ງນັ້ນດອກ. ພຣະເຢຊູບໍ່ໄດ້ປະຖິ້ມພວກທີ່ບໍ່ເຊື່ອຫລືພວກເກັບພາສີ. ພຣະອົງໄດ້ກ່າວກັບພວກເຂົາໃຫ້ປະສົບກັບຄວາມຮັກຂອງພຣະເຈົ້າແລະຮັບເອົາການປ່ຽນແປງຈາກຄວາມຮັກນັ້ນ. ພວກເຮົາຄວນຈະເຮັດເຊັ່ນນັ້ນເໝືອນກັນ. ພວກຄົນທີ່ປະຕິເສດບໍ່ຍອມຄືນດີກັນອີກແມ່ນພວກທີ່ປ່ອຍຝ່າຍວິນຍານແລະບໍ່ຄວນອະນຸຍາດໃຫ້ນຳພາຄຣິສຕະຈັກແລະບໍ່ໃຫ້ພະຍາດຂອງພວກເຂົາແຜ່ອອກ. ແຕ່ວ່າໂດຍຜ່ານການໃຫ້ຄຳປຶກສາ, ການຮັບຜິດຊອບ, ແລະຄຳອ້ອນວອນອະທິຖານ, ໂບດສາມາດເປັນສະຖານທີ່ເພື່ອຊ່ວຍພວກທີ່ຖືກທາລຸນຈາກຄວາມບາບອັນໃດອັນນຶ່ງໃຫ້ຫາຍດີໄດ້.

**ຂ. <u>ຫລັກການ</u>** (ຄາລາເຕັຽ 5:13-15)

ຂນະທີ່ຂ້າພະເຈົ້າກຳລັງຂັບຣົດຜ່ານເຂດອັນຕະລາຍໃນກາງຕົວເມືອງໃນຄືນມື້ນຶ່ງ. ຂ້າພະເຈົ້າແລ່ນຫຍຽບວັດຖຸອັນນຶ່ງທີ່ເຮັດໃຫ້ຕີນຫລັງກ້ຳຂວາຂອງຣົດກະບະຮົ່ວທັນທີ. ຂ້າພະເຈົ້າກໍພົບວ່າຕົນເອງຕົກຢູ່ຖ້າມກາງຄວາມມືດ, ຫ່າງຈາກເຮືອນຫລາຍຮ້ອຍໄມລ໌, ແລະຈະຊ້າໃນການໄປຝຶກຊ້ອມພິທີແຕ່ງງານ. ຂ້າພະເຈົ້າໄດ້ໂທຣຫາເພື່ອນຜູ້ນຶ່ງທີ່ມາ

ຮ່ວມໃນງານ. ລາວກໍຍິນດີຢ່າງເຕັມທີ່ງໄດ້ມາຊ່ວຍຂ້າພະເຈົ້າ. ບັນຫາອັນທໍາອິດກໍຄືຈະເອົາຕົນສໍາລອງທີ່ຫ້ອຍຢູ່ທາງກ້ອງຣົດກະບະນັ້ນ. ທີ່ນັ້ນກໍພໍມີແສງເລັກຫນ້ອຍທີ່ບໍ່ສາມາດເຮັດໃຫ້ຂ້າພະເຈົ້າຮູ້ວ່າມີຄວາມຄືບຫນ້າຫລືບໍ່. ຈົນກວ່າເພື່ອນຜູ້ນັ້ນເວົ້າວ່າ, ເຮັດຕາມຫລັກການ. ຫລັກການອັນໃດ?ຂ້າພະເຈົ້າຖາມຄືນ. ຫັນໄປທາງຂວາແມ່ນຫັນເຂົ້າຫັນໄປທາງຊ້າຍແມ່ນຫັນອອກ. ລາວເວົ້າຖືກ. ເຖິງວ່າຂ້າພະເຈົ້າຈະບໍ່ສາມາດເຫັນໄດ້, ຂ້າພະເຈົ້າເຮັດຕາມຫລັກການ, ໂດຍຫັນເຄື່ອງມືໄປທາງຊ້າຍ, ແລ້ວຕົນສໍາລອງກໍຕົກຫລົ່ນລົງທັນທີ, ພວກຂ້າພະເຈົ້າກໍທໍາການປ່ຽນຕົນຣົດແລະທັນເວລາໃນການໄປຝຶກຊ້ອມພິທີແຕ່ງງານ.

ຂໍ້ຂັດແຍ້ງທີ່ບໍ່ຖືກແກ້ໄຂເປັນເຫມືອນຄວາມມືດ, ເປັນບ່ອນອັນຕະລາຍ. ການມອງໃຫ້ເຫັນສິ່ງທີ່ຖືກຕ້ອງແລະເຮັດໃນສິ່ງທີ່ຫນ້າຮັກກໍແມ່ນຍາກຫລາຍ. ໂດຍຜ່ານພຣະທັມຂອງພຣະອົງ, ພຣະເຈົ້າກໍປະທານກົດຣະບຽບໃຫ້ເຮົາຕິດຕາມຂນະທີ່ຢູ່ໃນຄວາມມືດ. ຢູ່ໃນອັນຕະລາຍເມື່ອມີການແຕກແຍກກັນ: **ຮັກເພື່ອນບ້ານເຫມືອນຮັກຕົນເອງ**. ຖ້າວ່າພວກເຮົາຈະຝຶກແອບຫລັກການທີ່ພຣະເຈົ້າປະທານໃຫ້ນີ້, ການວັດແທກຄວາມຕອບສນອງຕໍ່ຄົນອື່ນໆໂດຍມາດຕະຖານຂອງຄວາມຮັກ, ຕໍ່ຈາກນັ້ນພວກເຮົາກໍຈະບໍ່ຕົກເຂົ້າສູ່ການທົດລອງໃຫ້ປະພຶດແບບເຫັນແກ່ຕົວຫລືຄວາມຄິດທີ່ຢາກແກ້ແຄ້ນຕໍ່ພວກທີ່ເຮັດໃຫ້ພວກເຮົາເຈັບປວດ. ສິ່ງບໍ່ດີເກີດຂຶ້ນເມື່ອພວກເຮົາຫາກຂາດໃນການຕິດຕາມການຊົງນໍາຂອງພຣະເຈົ້າແລະການໃຊ້**ເສຣີພາບແບບຜິດໆຄິດວ່າເປັນໂອກາດສໍາລັບຝ່າຍເນື້ອກາຍ**. ພວກເຮົາສາມາດດັບສູນຊຶ່ງກັນແລະກັນໄດ້, ປັກປ້ຳຄວາມດີເດັ່ນຂອງຜູ້ອື່ນ, ແລະພະຍານຂອງຄຣິສຕະຈັກ, ແລະການທໍາລາຍສາຍສໍາພັນກັບພວກຄົນຂອງພຣະເຈົ້າທີ່ໄດ້ຮຽກຮ້ອງໃຫ້ພວກເຮົາຮັກ. ແຕ່ວ່າຖ້າຫາກພວກເຮົາປະຕິບັດຕາມກົດຣະບຽບຂອງພຣະເຈົ້າ, ພວກເຮົາຈະເຮັດ, ແມ້ກະທັ້ງຢູ່ໃນຄວາມມືດແລະອັນຕະລາຍຄືໃນເວລາທີ່ແຕກແຍກກັນນັ້ນ. **ຮັບໃຊ້ຊຶ່ງກັນແລະກັນໂດຍທາງຄວາມຮັກ**.

**3. <u>ເປົ້າຫມາຍ</u>** (ຄາລາເຕັຽ 6:1-5)

ເມື່ອຄຣິສຕຽນຄົນໃດຄົນນຶ່ງຫາກຖືກຈັບໃນການເຮັດຜິດອັນໃດອັນນຶ່ງ, ຄວນໃຫ້ຄຣິສຕຽນທີ່ເປັນຜູ້ໃຫຍ່ແລ້ວຝ່າຍວິນຍານເປັນຜູ້ຊ່ວຍຄົນຢ່າງນັ້ນ. ເປົ້າຫມາຍຂອງການປະເຊີນຊຶ່ງຫນ້າບໍ່ແມ່ນການປະຈານຊ້ຳເຕີມຜູ້ນັ້ນ, ແຕ່ວ່າເພື່ອຢາກໄດ້ລາວກັບໃຈຄືນມາ. ຄຣິສຕຽນປະເຊີນຊຶ່ງຫນ້າກັນເພື່ອຈະຊ່ວຍໃຫ້ຊີວິດດີຂຶ້ນຫລືປົວແປງສາຍສໍາພັນທີ່ຫັກພັງນັ້ນ.

ຄຣິສຕຽນຕ້ອງປະເຊີນຊຶ່ງຫນ້າດ້ວຍວິນຍານທີ່ອ່ອນສຸພາບ. ຄຣິສຕຽນບາງຄົນເຮັດໃຫ້ຄົນອື່ນເຫີນຫ່າງຈາກພຣະເຈົ້າໄປເພາະການປະເຊີນຊຶ່ງຫນ້າດ້ວຍຄໍາບອກເຕືອນທີ່ສຸດຍອດ ແຕ່ວ່າດ້ວຍກິຣິຍາທີ່ເຄືອງແຄ້ນ. ພວກເຮົາຕ້ອງປະເຊີນຊຶ່ງຫນ້າພວກເຂົາເພື່ອຫວັງສ້າງພວກເຂົາຄືນອີກດ້ວຍວິນຍານທີ່ອ່ອນສຸພາບ, "ການກ່າວຄວາມຈິງດ້ວຍໃຈຮັກ" (ເອເຟໂຊ 4:15).

ນັກຊ່ວຍຊີວິດໄດ້ບອກຂ້າພະເຈົ້າວ່າການທີ່ຈະໂດດລົງໄປໃນນ້ຳເພື່ອຊ່ວຍຜູ້ທີ່ກໍາລັງດົກນ້ຳຢູ່ນັ້ນມັນເປັນຂັ້ນສຸດທ້າຍທີ່ຈະຕ້ອງໄດ້ເຮັດເພາະວ່າມັນເຮັດໃຫ້ທັງຜູ້ດົກນ້ຳແລະຜູ້ທີ່ຈະຊ່ວຍຕົກໃນຂັ້ນອັນຕະລາຍນໍາກັນ. ແທນທີ່ຈະເຮັດແນວນັ້ນ, ລາວບອກວ່າ, ຕ້ອງຢືນຢູ່ບ່ອນທີ່ປອດພັຍແລະໃຊ້ໄມ້, ເຊືອກ, ຫລືສິ່ງທີ່ເຮັດໃຫ້ຟູເພື່ອຈະໄດ້ດຶງຜູ້ນັ້ນອອກຈາກນ້ຳ.

ເມື່ອພວກຄຣິສຕຽນຊອກຫາທາງທີ່ຈະຊ່ວຍຄຣິສຕຽນບາງຄົນທີ່ຕົກໄປໃນຄວາມບາບ, ພວກເຮົາຖືກເຕືອນວ່າ**ໃຫ້ພວກເຮົາລະວັງເພື່ອວ່າຈະບໍ່ຕົກໃນການທົດລອງເຫມືອນກັນ**. ພວກເຮົາບໍ່ໄດ້ຊ່ອຍຜູ້ອື່ນຫລືຕົວເຮົາເອງເລີຍເມື່ອພວກເຮົາຫາກໂດດລົງໃນການທົດລອງແລະເຮັດໃຫ້ຕົວເຮົາເອງຕົກຢູ່ໃນອັນຕະລາຍທີ່ບໍ່ຈໍາເປັນ. ພວກເຮົາຕ້ອງຢືນຢູ່ທີ່ບ່ອນປອດພັຍຄືຄວາມບໍລິສຸດແລະການຮັບຜິດຊອບຂອງຕົວເອງເພື່ອຈະສາມາດຊ່ອຍດຶງຄົນອື່ນໆຂຶ້ນໄດ້.

ການທົດລອງທີ່ຍິ່ງໃຫຍ່ອັນນຶ່ງທີ່ຄຣິສຕຽນເຂົ້າໃຈຜິດໃນການຊອກຫາທາງເຮັດໃຫ້ຄຣິສຕຽນຄົນອື່ນ ໆ ລຸກຂຶ້ນຕັ້ງຕົວໃຫມ່. ເມື່ອພວກເຮົາຮູ້ຈັກເຖິງຄວາມບົກພ່ອງຂອງຄຣິສຕຽນຜູ້ອື່ນໆແລ້ວ, ພວກເຮົາມັກຈະວັດແທກໃຫ້ເຂົ້າຂ້າງຕົວເຮົາເອງວ່າຊີວິດຝ່າຍຈິດວິນຍານຂອງພວກເຮົາກໍ**ເປັນທີ່ນັບຖືຂອງຄົນອື່ນພົ້ນອີກ**. ແທນທີ່ຈະເປັນແນວນັ້ນ, ຄຣິສຕຽນແຕ່ລະຄົນຕ້ອງ**ພິຈາຣະນາວຽກງານຂອງຕົນເອງ**ແລະກໍວັດແທກຊີວິດຂອງພວກເຮົາເອງໃສ່ການຮຽກເອີ້ນ

ອັນສູງສົ່ງຂອງພຣະເຢຊູຄຣິດ.

ເມື່ອຕອນທີ່ຂ້າພະເຈົ້າຍັງເປັນນັກສຶກສາຢູ່, ຂ້າພະເຈົ້າໄດ້ໃຊ້ເທີນນຶ່ງໃນການເດີນທາງໄປສຶກສາແຖວຕາເວັນອອກກາງແລະແຖວເອີຣົບ. ອາຈານໄດ້ເຕືອນວ່າຫ້າມພົກເຄື່ອງໄປຫລາຍເພາະວ່າແຕ່ລະຄົນຕ້ອງຮັບພາຣະແບກເຄື່ອງຂອງຕົນເອງ. ທຸກຄົນກໍປະຕິບັດຕາມກົດອັນນັ້ນ. ແຕ່ວ່າມື້ນຶ່ງ, ຂ້າພະເຈົ້າບໍ່ສະບາຍຢ່າງກະທັນຫັນ, ຄວາມໄຂ້ຂຶ້ນສູງ. ຂນະທີ່ບໍ່ສະບາຍຢູ່ນັ້ນພວກເພື່ອນໆກໍຈຳເປັນຕ້ອງໄດ້ຊ່ວຍແບກເຄື່ອງໃຫ້ຈົນກວ່າຂ້າພະເຈົ້າຈະດີມີແຮງຂຶ້ນພໍທີ່ຈະແບກເຄື່ອງຂອງນັ້ນໄດ້ອີກ.

ໃນຂໍ້ທີ 5, ທ່ານໂປໂລໄດ້ບອກໃຫ້ຄຣິສຕຽນແຕ່ລະຄົນຕ້ອງ**ຮັບຜິດຊອບພາຣະຂອງຕົນເອງ**. ພວກເຮົາມີໜ້າທີ່ຮັບຜິດຊອບສຳລັບຊີວິດແລະການກະທຳຕ່າງໆຂອງພວກເຮົາຕໍ່ຄົນອື່ນໆ. ແຕ່ວ່າບາງຄັ້ງຄາວຄວາມຜິດບາບແລະບັນຫາຂອງພວກເຮົາກໍໃຫຍ່ຂຶ້ນຈົນບໍ່ສາມາດທີ່ຈະຮັບພາຣະຜູ້ດຽວໄດ້. ໃນຂນະທີ່ພວກເຮົາອ່ອນກຳລັງ, ພວກເຮົາຕ້ອງ**ຊ່ວຍຮັບພາຣະໜັກຂອງຊຶ່ງກັນແລະກັນ**. ພວກເຮົາສາມາດຮູ້ຈັກໄດ້ວ່າພວກເຮົາປະເຊີນຊື່ງໜ້າກັບສິ່ງເຫລົ່ານັ້ນໃນທາງແລະເຫດຜົນທີ່ຖືກຕ້ອງ ຄືເມື່ອພວກເຮົາຫາກຍື່ນມືເຂົ້າຊ່ວຍຜູ້ອື່ນໆໃນສິ່ງທີ່ພວກເຂົາຕ້ອງການໃນການເອົາຊະນະຕໍ່ບັນຫາຂອງພວກເຂົາແລະພວກເຂົາກໍຈະພົບສັນຕິສຸກອັນແທ້ຈິງ.

## <u>ບົດຮຽນຊີວິດ</u>

- ຕິດຕາມຂັ້ນຕອນຂອງພຣະເຈົ້າ. ທ່ານບໍ່ສາມາດທີ່ຈະເຮັດໃນສິ່ງທີ່ຖືກຕ້ອງໄດ້ຈົນກວ່າທ່ານຈະເຮັດໃນທາງທີ່ຖືກຕ້ອງກ່ອນ.
- ເປັນຜູ້ເລີ້ມເຮັດກ່ອນ, ບໍ່ວ່າຈະເປັນຄວາມຜິດຂອງຜູ້ໃດ. ຈຳກັດຈຳນວນຄົນບໍ່ໃຫ້ມີຫລາຍຄົນເຂົ້າມາມີສ່ວນຮ່ວມເທົ່າທີ່ຈະເຮັດໄດ້.
- ຊອກຫາຄວາມຊ່ວຍເຫລືອເມື່ອທ່ານຕ້ອງການ.
- ສຳລັບຄຣິສຕຽນແລະຄຣິສຕະຈັກ ຕ້ອງປະເຊີນໜ້າກັບບັນຫາຕ່າງໆທີ່ເກີດຈາກຂໍ້ຂັດແຍ້ງທີ່ຍັງບໍ່ຖືກແກ້ໄຂນັ້ນ.
- ວັດແທກການປະເຊີນຊື້ງໜ້າຂອງທ່ານໂດຍຫລັກການຂອງພຣະເຈົ້າທີ່ມີພື້ນຖານໃນຄວາມຮັກ.
- ປະເຊີນໜ້າໃນທາງທີ່ທ່ານຕ້ອງການຢາກໃຫ້ຜູ້ອື່ນສະແດງຕໍ່ທ່ານໃນຍາມທ່ານມີຄວາມຜິດພາດ.
- ໃຫ້ຕັ້ງຢູ່ໃນເປົ້າໝາຍທີ່ຖືກຕ້ອງ. ພວກຄຣິສຕຽນຈະບໍ່ປະເຊີນຊື່ງໜ້າເພື່ອຫວັງຢາກຍົກຕົວເອງຂຶ້ນຫລືທຳລາຍຜູ້ທີ່ເຮັດໃຫ້ເຂົາເຈັບນັ້ນລົງ. ພຣະເຈົ້າໄດ້ຮຽກຮ້ອງພວກເຮົາໃຫ້ສ້ອມແປງຊີວິດທີ່ຫັກພັງນັ້ນແລະປິ່ນປົວບາດແຜຂອງສາຍສຳພັນຕໍ່ກັນແລະກັນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by PA